ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂທລະສັບ: (856-21)520715, ແຟັກ:(856-21)256259
BAN VATTAINOYTHONG, SIKHOTTHABONG DISTRICT, VIENTIANE CAPITAL. TEL: (856-21)520715, FAX: (856-21)256259

ເລກທີ: 024 -/ລອທ

ນະຄອນຫຼວງວຽງຈັນ, 28 APR 2022

ຮຽນ : ທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອໍານວຍການໃຫຍ່ຕະຫຼາດຫລັກຊັບລາວ ຈໍາກັດ ທີ່ນັບຖື,
ທ່ານ ຜູ້ຖືຮຸ້ນ ຂອງ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2021

- ອີງຕາມຂໍ້ຕົກລົງຂອງຄະນະກໍາມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບ ເລກທີ 004/ຄຄຊ, ລົງວັນທີ 28/1/2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ລອທ) ໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນປະຈໍາປີ 2021 ເມື່ອວັນທີ 27 ເມສາ 2022 ເວລາ 14:00ໂມງ, ທີ່ໂຮງແຮມ ແລນມາກ ລິເວີໄຊ, ຊັ້ນ 4, ຫ້ອງປະຊຸມ Diamond, ບ້ານທາດຂາວ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ, ມີຜູ້ຖືຮຸ້ນເຂົ້າຮ່ວມປະຊຸມທັງໝົດ 12 ທ່ານ, ແບ່ງເປັນຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມດ້ວຍຕົນເອງຈໍານວນ 07 ທ່ານ ແລະ ຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຈໍານວນ 05 ທ່ານ ຖືຮຸ້ນລວມ 80,207,095 ຮຸ້ນ ຄິດເປັນ 80.21 % ຂອງຈໍານວນຮຸ້ນທັງໝົດຂອງບໍລິສັດ ໂດຍທີ່ປະຊຸມໄດ້ມີມະຕິດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງບົດລາຍງານການດໍາເນີນທຸລະກິດຂອງບໍລິສັດ ປະຈໍາປີ 2020

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 80,207,095 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 80,207,095 ສຽງ ຄິດເປັນ 100 %

2. ພິຈາລະນາ ແລະ ຮັບຮອງຜົນການດໍາເນີນທຸລະກິດປະຈໍາປີ 2021 ແລະ ເອກະສານລາຍງານການເງິນຂອງບໍລິສັດ ປະຈໍາປີ 2021.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 80,207,095 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 80,207,095 ສຽງ ຄິດເປັນ 100 %

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
Lao Agro Tech Public Company
ບ້ານ ວັດໄຕນ້ອຍທົ່ງ, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ໂທລະສັບ: (856-21)520715, ແຟັກ:(856-21)256259
BAN VATTAINOYTHONG, SIKHOTTHABONG DISTRICT, VIENTIANE CAPITAL. TEL: (856-21)520715, FAX: (856-21)256259

3. ພິຈາລະນາ ແລະ ຮັບຮອງແຜນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2022.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 80,207,095 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 80,207,095 ສຽງ ຄິດເປັນ 100 %

4. ພິຈາລະນາ ແລະ ຮັບຮອງການບໍ່ຈ່າຍເງິນປັນຜົນ ຈາກການດຳເນີນທຸລະກິດ ປະຈຳປີ 2021.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 80,207,095 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 80,207,095 ສຽງ ຄິດເປັນ 100 %

5. ພິຈາລະນາການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ການກຳນົດຄ່າບໍລິການການກວດສອບບັນຊີພາຍນອກ ປະຈຳປີ 2022.

ກອງປະຊຸມໄດ້ລົງມະຕິເຫັນດີດ້ວຍສຽງເປັນເອກະພາບ ໂດຍມີຄະແນນສຽງດັ່ງນີ້:

- ເຫັນດີ 80,207,095 ສຽງ ຄິດເປັນ 100 %
- ບໍ່ເຫັນດີ 0 ສຽງ ຄິດເປັນ 0 %
- ລວມ 80,207,095 ສຽງ ຄິດເປັນ 100 %

ທີ່ປະຊຸມຜູ້ຖືຮຸ້ນບໍ່ມີຂໍ້ພິຈາລະນາອື່ນໆ ດັ່ງນັ້ນ ປະທານຈຶ່ງກ່າວປິດກອງປະຊຸມເວລາ 15:30ໂມງ, ຈຶ່ງຮຽນມາເພື່ອຊາບ.

ດ້ວຍເຄົາລົບ ແລະ ນັບຖື

ອຳນວຍການບໍລິສັດ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company